# ມິຊຊາອາທິດທີ 13 ກຳນົດທຳມະດາ ປີ B
# ວັນທີ 1 ກໍລະກົດ 2018



**ພຣະວໍລະສານໂດຍນັກບຸນມັກໂກ 5, 21-24; 35-43**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດຂ້າມທະເລຟາກພຸ້ນ. ມີຝູງຊົນມາກມາຍມາຊຸມກັນຢູ່ອ້ອມພຣະອົງ. ສ່ວນພຣະອົງປະທັບຢູ່ບົນຝັ່ງທະເລ. ມີຫົວໜ້າໂຮງທັມຜູ້ໜຶ່ງຊື່ຢາອີ ແນມເຫັນພຣະເຢຊູເຈົ້າ, ກໍມາຂາບລົງແທບພຣະບາດພຣະອົງ ແລະວອນຂໍພຣະອົງວ່າ: ບຸດສາວຂອງຂ້ານ້ອຍຈວນຈະຕາຍຢູ່ແລ້ວ. ເຊີນພຣະອົງສະເດັດໄປປົກມືໃຫ້ ແລ້ວເຂົາຈະໄດ້ຮອດແລະມີຊີວິດ. ພຣະເຢຊູເຈົ້າກໍສະເດັດໄປກັບເຂົາ. ຝູງຊົນທີ່ຕິດຕາມມາມີຈຳນວນມາກມາຍຈົນບຽດພຣະອົງໄປ.

ໃນເວລານັ້ນ ມີຄົນມາແຕ່ເຮືອນຂອງຢາອີເພື່ອແຈ້ງຂ່າວໃຫ້ເພິ່ນວ່າ: ບຸດສາວຂອງທ່ານຕາຍແລ້ວ. ຢ່າໄປຣົບກວນພຣະອາຈານອີກເຮັດຫຍັງ? ເມື່ອພຣະເຢຊູເຈົ້າຊາບຂ່າວນີ້ ກໍຊົງກ່າວກັບຫົວໜ້າໂຮງທັມວ່າ: « ທ່ານຢ່າຢ້ານເລີຍ, ຂໍໃຫ້ເຊື່ອກໍເປັນພໍ ». ພຣະອົງບໍ່ໄດ້ປະໃຫ້ຜູ້ໃດຕິດຕາມພຣະອົງໄປນອກຈາກເປໂຕ, ຢາໂກເບ ແລະຢວງຜູ້ນ້ອງຊາຍ.

ເມື່ອສະເດັດມາຮອດເຮືອນຂອງຫົວໜ້າໂຮງທັມ. ກໍເຫັນມີການອຶກກະທຶກ, ເຫັນຄົນຮ້ອງໄຫ້ສຽງດັງ. ເມື່ອສະເດັດເຂົ້າໄປໃນເຮືອນ, ພຣະອົງຊົງກ່າວກັບພວກນັ້ນວ່າ: ເປັນຫຍັງພວກເຈົ້າຈຶ່ງອຶກກະທຶກແລະຮ້ອງໄຫ້? ນາງນ້ອຍນັ້ນບໍ່ໄດ້ຕາຍດອກ ແຕ່ນອນຫລັບຢູ່ເທົ່ານັ້ນ. ພວກເຂົາກໍພາກັນຫົວຂວັນພຣະອົງ.

ພຣະອົງສັ່ງໃຫ້ທຸກຄົນອອກໄປນອກ, ເອົາໄວ້ແຕ່ບິດາມານດາຂອງເດັກແລະສາວົກທີ່ຕິດຕາມພຣະອົງໄປເທົ່ານັ້ນ. ແລ້ວພຣະອົງສະເດັດເຂົ້າໄປໃນບ່ອນທີ່ເດັກຍິງນັ້ນນອນຢູ່. ພຣະອົງຊົງຈັບມືເດັກຍິງນັ້ນແລະສັ່ງວ່າ: « ຕາລີຕາກຸມ ». ແປວ່າ: « ນາງນ້ອຍເອີຍ! ເຮົາສັ່ງເຈົ້າຈົ່ງລຸກຂຶ້ນ ». ທັນທີ, ເດັກນັ້ນກໍລຸກຂຶ້ນແລະຍ່າງ. ນາງມີອາຍຸ 12 ປີ. ຄົນທັງຫລາຍມີຄວາມຕົກໃຈຢ່າງໃຫຍ່. ແຕ່ພຣະເຢຊູເຈົ້າໄດ້ສັ່ງຫ້າມບໍ່ໃຫ້ບອກຂ່າວນີ້ແກ່ຜູ້ໃດ. ແລ້ວພຣະອົງກໍສັ່ງໃຫ້ເອົາອາຫານມາໃຫ້ນາງນ້ອຍກິນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 5, 21-24; 35-43**

ເມື່ອພວກເຮົາຟັງພຣະວໍລະສານຕອນນີ້, ຫລາຍຄົນກໍມີຄວາມເຂົ້າໃຈວ່າພຣະວໍລະສານເລົ່າເຖິງພຣະເຢຊູເຈົ້າທີ່ປິ່ນປົວລູກສາວຂອງທ່ານຢາອີຜູ້ເປັນຫົວໜ້າໂຮງທັມໃຫ້ມີຊີວິດ. ແຕ່ຖ້າພວກເຮົາອ່ານວາຈາຂອງພຣະເຈົ້າຕອນນີ້ດ້ວຍຄວາມເອົາໃຈໃສ່ ພວກເຮົາຈະເຫັນວ່າຄົນທຳອິດທີ່ພຣະເຢຊູເຈົ້າປິ່ນປົວນັ້ນບໍ່ແມ່ນລູກສາວຂອງຫົວໜ້າໂຮງທັມ, ແຕ່ເປັນຫົວໜ້າໂຮງທັມນັ້ນເອງ. ເຖິງວ່າທ່ານຢາອີຈະແລ່ນມາກາບລົງວອນຂໍພຣະເຢຊູເຈົ້າໃຫ້ໄປປິ່ນປົວລູກສາວຂອງທ່ານທີ່ຈວນຈະຕາຍ, ແຕ່ຜູ້ຂຽນພຣະວໍລະສານກໍບໍ່ໄດ້ບອກໃຫ້ພວກເຮົາຮູ້ວ່າຜູ້ເປັນຫົວໜ້າໂຮງທັມນີ້ມີຄວາມເຊື່ອໃນພຣະເຢຊູເຈົ້າ. ພວກເຮົາຮູ້ແຕ່ວ່າພຣະເຢຊູເຈົ້າກ່າວຕໍ່ທ່ານຢາອີວ່າ: ຢ່າຢ້ານເລີຍ, ຂໍໃຫ້ເຊື່ອກໍເປັນພໍ. ຄຳເວົ້ານີ້ຂອງພຣະເຢຊູເຈົ້າອາດມີສອງຄວາມໝາຍຄື: ເມື່ອຫົວໜ້າໂຮງທັມຢູ່ຕໍ່ໜ້າຄວາມຢ້ານກົວຄືຄວາມຕາຍຂອງລູກສາວຂອງທ່ານ, ທ່ານຈຶ່ງເຊື່ອວ່າພຣະເຢຊູເຈົ້າຈະສາມາດຊ່ວຍລູກສາວຂອງທ່ານໃຫ້ຮອດໄດ້. ຄວາມໝາຍທີສອງຄືຫົວໜ້າໂຮງທັມເຊື່ອໃນລິດອຳນາດຂອງພຣະເຢຊູເຈົ້າ, ແຕ່ຄວາມເຊື່ອນີ້ຍັງປົນເປກັບຄວາມຢ້ານອັນເປັນເຄື່ອງໝາຍຂອງການສົງໄສ. ສິ່ງນີ້ພວກເຮົາສາມາດເຫັນໄດ້ຜ່ານທາງຄົນໃນຄອບຄົວຂອງທ່ານຢາອີທີ່ບອກກັບທ່ານວ່າຢ່າໄປລົບກວນພຣະເຢຊູເຈົ້າອີກເລີຍ ເພາະລູກສາວຂອງທ່ານໄດ້ເສຍຊີວິດແລ້ວ. ແລະເມື່ອເວລາພຣະເຢຊູເຈົ້າບອກກັບທຸກຄົນທີ່ຮ້ອງໄຫ້ວ່າ: ນາງນ້ອຍນີ້ບໍ່ໄດ້ຕາຍ ແຕ່ນອນຫລັບຢູ່. ທຸກຄົນກໍພາກັນຫົວຂວັນພຣະອົງ. ສິ່ງເຫລົ່ານີ້ສະທ້ອນໃຫ້ພວກເຮົາເຫັນວ່າຄວາມເຊື່ອຂອງທ່ານຢາອີ, ຫົວໜ້າໂຮງທັມອາດຈະຍັງບໍ່ພຽງພໍ. ດັ່ງນັ້ນພຣະເຢຊູເຈົ້າຈຶ່ງກ່າວກັບທ່ານວ່າ: ໃຫ້ເຊື່ອເທົ່ານັ້ນກໍພໍ.

ຈາກນັ້ນ, ພຣະເຢຊູເຈົ້າໄດ້ຢັ້ງຢືນໃຫ້ທຸກຄົນເຫັນວ່າ ໝາກຜົນຂອງຄວາມເຊື່ອທີ່ແທ້ຈິງຄືສິ່ງທີ່ມະນຸດຄິດວ່າເປັນໄປບໍ່ໄດ້, ແຕ່ສຳລັບພຣະເຈົ້າເປັນໄປໄດ້. ສິ່ງທີ່ມະນຸດຄິດວ່າເປັນຈຸດຈົບຄືຄວາມຕາຍ, ແຕ່ສຳລັບພຣະເຈົ້າຄວາມຕາຍນີ້ເປັນພຽງແຕ່ການພັກຜ່ອນຊົ່ວຄາວ, ການນອນຫລັບ. ພຣະເຢຊູເຈົ້າໄດ້ສັ່ງໃຫ້ນາງນ້ອຍທີ່ຕາຍແລ້ວໃຫ້ລຸກຂຶ້ນ ແລະນາງກໍມີຊີວິດ.

ພຣະວໍລະສານໃນວັນນີ້ຢາກສອນພວກເຮົາຫຍັງ? ພວກເຮົາຜູ້ມາວັດຟັງວາຈາຂອງພຣະເຈົ້າພວກເຮົາເຊື່ອໃນພຣະອົງແທ້ບໍ? ຫລືພວກເຮົາແລ່ນມາຫາພຣະເຈົ້າພຽງແຕ່ໃນຍາມຂັດສົນຫລືໃນຍາມທີ່ພວກເຮົາຕ້ອງການໃຫ້ພຣະອົງຊ່ວຍພວກເຮົາເທົ່ານັ້ນ? ພວກເຮົາເຊື່ອບໍ່ວ່າ ຖ້າພວກເຮົາເຊື່ອໃນພຣະເຈົ້າເຖິງວ່າພວກເຮົາຈະຕາຍ, ແຕ່ພວກເຮົາຈະມີຊີວິດ?

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ສະທ້ອນໃຫ້ພວກເຮົາເຫັນເຖິງຄວາມອ່ອນແອໃນຊີວິດຄວາມເຊື່ອຂອງພວກເຮົາ ເພື່ອພຣະເຢຊູເຈົ້າຈະໄດ້ປິ່ນປົວພວກເຮົາ ເໝືອນດັ່ງພຣະອົງໄດ້ປິ່ນປົວຢາອີຜູ້ເປັນຫົວໜ້າໂຮງທັມແລະລູກສາວຂອງທ່ານນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ